# ມິຊຊາອາທິດທີ 3 ກຳນົດປາສກາ
# ວັນທີ 5 ພຶດສະພາ 2019



**ພຣະວໍລະສານໂດຍນັກບຸນຍວງ 21, 1-14**

ໃນເວລານັ້ນພຣະເຢຊູເຈົ້າຊົງປະຈັກມາຫາພວກລູກສິດອີກຢູ່ຮີມຝັ່ງທະເລສາບຕີເບຣີອັດ. ເລື່ອງລາວເປັນດັ່ງນີ້ຄື: ຊີມອນເປໂຕຣ, ໂທມາສຜູ້ມີຊື່ນ້ອຍວ່າດີດີມ, ນາທານາແອນໄທບ້ານການາແຂວງກາລີເລ, ບຸດຊາຍຂອງເຊເບເດແລະລູກສິດຂອງພຣະອົງອີກສອງຄົນຢູ່ຮ່ວມກັນ. ຊີມອນເປໂຕເວົ້າກັບໝູ່ວ່າ: ເຮົາຈະໄປຫາປາ. ລູກສິດຜູ້ອື່ນເລີຍວ່າ: ໝູ່ເຮົາກໍຈະໄປນຳ. ແລ້ວກໍພາກັນລົງເຮືອ. ໝົດຄືນນັ້ນບໍ່ໄດ້ປາຈັກໂຕ.

ພໍສະວ່າງແຈ້ງ, ພຣະເຢຊູເຈົ້າກໍປະຈັກມາຢູ່ຮີມຝັ່ງ ແຕ່ພວກລູກສິດບໍ່ຮູ້ວ່າແມ່ນພຣະອົງ. ພຣະເຢຊູເຈົ້າກ່າວກັບພວກເຂົາວ່າ: ພວກລູກເອີຍ! ໄດ້ປາບໍ? ພວກເຂົາທູນຕອບວ່າ: ບໍ່ໄດ້ຫຍັງ. ພຣະອົງຈຶ່ງກ່າວວ່າ: ຕຶກມອງລົງທາງເບື້ອງຂວາເຮືອແລະຈະໄດ້. ພວກເຂົາກໍທຳຕາມແລະແກ່ມອງຂຶ້ນບໍ່ໄຫວ, ຍ້ອນຖືກປາຈຳນວນຫລາຍ.

ລູກສິດຜູ້ພຣະເຢຊູເຈົ້າຮັກແພງເວົ້າກັບເປໂຕວ່າ: ແມ່ນພຣະອົງເຈົ້າ. ໄດ້ຍິນວ່າແມ່ນພຣະອົງເຈົ້າຊີມອນເປໂຕກໍເອົາແພມານຸ່ງ ຍ້ອນເພິ່ນໄດ້ເປືອຍໂຕ, ແລ້ວໂດດລົງທະເລ. ສ່ວນລູກສິດຜູ້ອື່ນໄປກັບເຮືອທັງແກ່ມອງໄປພ້ອມຍ້ອນຢູ່ໄກຝັ່ງປະມານ 200 ສອກ. ເມື່ອຂຶ້ນຝັ່ງແລ້ວ, ພວກເຂົາກໍເຫັນມີໄຟດັງໄວ້ແລ້ວ. ມີປາປີ້ງຄ້າງໄຟຢູ່ແລະເຂົ້າຈີ່ດ້ວຍ. ພຣະເຢຊູເຈົ້າກ່າວບອກພວກເຂົາວ່າ: ໄປເອົາປາຕຶກມອງໄດ້ນັ້ນມາດຽວນີ້. ຊີມອນເປໂຕຈຶ່ງລົງໄປໃນເຮືອແກ່ມອງຂຶ້ນຝັ່ງ, ມີປາໃຫຍ່ຄາຢູ່ 153ໂຕ. ແມ່ນແຕ່ຖືກປາຫລາຍປານນີ້ມອງກໍບໍ່ຂາດ.

ພຣະເຢຊູເຈົ້າບອກພວກເຂົາວ່າ: ຈົ່ງມາກິນເຂົ້າ. ບໍ່ມີໃຜໃນພວກລູກສິດກ້າຖາມວ່າພຣະອົງແມ່ນຜູ້ໃດ. ຍ້ອນໃຜກໍຮູ້ດີວ່າແມ່ນພຣະອົງເຈົ້າແທ້. ພຣະເຢຊູເຈົ້າສະເດັດມານັ່ງໃກ້ໆ, ຈັບເອົາເຂົ້າຈີ່ຢາຍໃຫ້ພວກເຂົາແລ້ວຢາຍປາໃຫ້ດັ່ງດຽວກັນ.

ນີ້ແມ່ນເທື່ອທີສາມທີ່ພຣະເຢຊູເຈົ້າປະຈັກມາຫາພວກລູກສິດ ຫລັງຈາກໄດ້ກັບເປັນຄືນມາຈາກພວກຜູ້ຕາຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 21, 1-14**

*ນີ້ແມ່ນເທື່ອທີສາມທີ່ພຣະເຢຊູເຈົ້າປະຈັກມາຫາພວກລູກສິດ ຫລັງຈາກໄດ້ກັບເປັນຄືນມາຈາກພວກຜູ້ຕາຍ.*

ຜູ້ທຳອິດທີ່ພຣະເຢຊູເຈົ້າກັບເປັນຄືນມາປະຈັກມາຫາໃນວັນຕົ້ນອາທິດເວລາຍັງມືດຢູ່ ແມ່ນນາງມາຣີອາມັກດາເຣນາ. ມາຣີອາມັກດາເຣນາຈື່ຈຳພຣະເຢຊູເຈົ້າໄດ້ຍ້ອນສຽງປາກຂອງພຣະອົງ. ຈາກນັ້ນ, ພຣະເຢຊູເຈົ້າບອກໃຫ້ນາງຈົ່ງນຳເອົາຂ່າວດີແຫ່ງການກັບເປັນຄືນມາຂອງພຣະອົງນີ້ໄປບອກໃຫ້ພວກລູກສິດຮູ້ຈັກ.

ໃນຕອນຄ່ຳຂອງມື້ດຽວກັນອັນແມ່ນມື້ຕົ້ນອາທິດ, ພຣະເຢຊູເຈົ້າໄດ້ປະຈັກມາຫາພວກລູກສິດທີ່ກຳລັງຢູ່ໃນຫ້ອງປິດປະຕູໄວ້ຢ່າງດີຍ້ອນຢ້ານພວກຢູເດວ. ພຣະເຢຊູເຈົ້າກໍປະຈັກມາຫາພວກເຂົາແລະກ່າວວ່າ: ສັນຕິສຸກຈົ່ງມີແກ່ພວກເຈົ້າ. ຈາກນັ້ນ, ພຣະອົງກໍໃຫ້ພວກເຂົາເຫັນຮອຍບາດແຜເທິງພຣະກາຍຂອງພຣະອົງ. ພວກລູກສິດມີຄວາມຊື່ນຊົມຍິນດີຍ້ອນໄດ້ເຫັນພຣະອົງ. ຈາກນັ້ນ, ພຣະເຢຊູເຈົ້າກໍໄດ້ສົ່ງພວກເຂົາໄປເພື່ອເປັນພິຍານເຖິງພຣະອົງດ້ວຍການຍົກໂທດໂຜດບາບໃຫ້ຜູ້ທີ່ເຂົາພົບພໍ້. ນີ້ແມ່ນເທື່ອທຳອິດທີ່ພຣະເຢຊູເຈົ້າກັບເປັນຄືນມາປະຈັກມາຫາພວກລູກສິດ.

ຍ້ອນໂທມາຜູ້ມີຊື່ນ້ອຍວ່າດີດິມຊຶ່ງແມ່ນຜູ້ໜຶ່ງໃນຈຳນວນພວກລູກສິດຂອງພຣະເຢຊູເຈົ້າບໍ່ໄດ້ຢູ່ທີ່ນັ້ນເມື່ອເວລາພຣະອົງປະຈັກມາ. ໂທມາສຈຶ່ງບໍ່ຍອມເຊື່ອຕາມຄຳບອກເລົ່າຂອງພວກລູກສິດຄົນອື່ນ. ດັ່ງນັ້ນ, ແປດມື້ຕໍ່ມາ, ພຣະເຢຊູເຈົ້າຈຶ່ງປະຈັກມາຫາພວກລູກສິດອີກເທື່ອໜຶ່ງ. ເວລານັ້ນ, ໂທມາສກໍໄດ້ຢູ່ດ້ວຍ. ພຣະອົງໄດ້ໃຫ້ໂທມາສເອົາມືຂອງຕົນມາສຳພັດຮອຍບາດແຜບົນພຣະກາຍຂອງພຣະອົງແລະໂທມາສກໍໄດ້ເຊື່ອແລະຮ້ອງຂຶ້ນວ່າ: ໂອພຣະອົງ, ພຣະເຈົ້າຂອງຂ້າພະເຈົ້າ! ແຕ່ພຣະເຢຊູເຈົ້າກ່າວກັບໂທມາວ່າ: ຍ້ອນເຈົ້າໄດ້ເຫັນເຈົ້າຈຶ່ງເຊື່ອ. ບຸນລາບແກ່ຜູ້ທີ່ບໍ່ເຫັນແຕ່ເຊື່ອ. ນີ້ແມ່ນເທື່ອທີສອງທີ່ພຣະເຢຊູເຈົ້າປະຈັກມາຫາພວກລູກສິດ.

ວັນນີ້, ຢູ່ຣິມຝັ່ງທະເລສາບຕິເບລີອັດ, ເມື່ອເວລາພວກລູກສິດກຳລັງຢູ່ໃນຄວາມສິ້ນຫວັງຍ້ອນພວກເຂົາໄດ້ອິດເມື່ອຍຕະຫລອດຄືນແຕ່ບໍ່ໄດ້ປາຈັກໂຕ. ພຣະເຢຊູເຈົ້າກໍໄດ້ປະຈັກມາຫາພວກເຂົາ. ພຣະອົງໄດ້ນຳເອົາຄວາມຫວັງແລະຄວາມຍິນດີມາໃຫ້ພວກເຂົາໂດຍໃຫ້ພວກເຂົາໄດ້ປາເປັນຈຳນວນຫລວງຫລາຍ. ລູກສິດຜູ້ພຣະເຢຊູເຈົ້າຮັກແພງກໍໄດ້ຈື່ຈຳພຣະອົງ. ຈາກນັ້ນພຣະເຢຊູເຈົ້າກໍເຊີນພວກລູກສິດມາຮ່ວມພາເຂົ້າກັບພຣະອົງ. ນີ້ແມ່ນເທື່ອທີສາມທີ່ພຣະເຢຊູເຈົ້າປະຈັກມາຫາພວກລູກສິດ.

ສ່ວນພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າ ພຣະອົງໄດ້ປະຈັກມາຫາພວກເຮົາເວລາໃດ? ພວກເຮົາໄດ້ຈື່ຈຳພຣະອົງບໍ? ພຣະອົງໄດ້ທຳອັດສະຈັນອັນໃດໃນຊີວິດຂອງພວກເຮົາ? ແລະອັດສະຈັນນີ້ມີຄວາມສຳຄັນຫຍັງສຳລັບພວກເຮົາ?

ແນ່ນອນ, ວັນນີ້ພຣະເຢຊູເຈົ້າກໍຍັງສືບຕໍ່ປະຈັກມາຫາພວກເຮົາໃນຄຳພາວະນາ. ຍ້ອນພຣະອົງກ່າວວ່າ: ຢູ່ໃສມີສອງສາມຄົນເຕົ້າໂຮມກັນໃນນາມຂອງເຮົາ, ເຮົາກໍຢູ່ທີ່ນັ້ນ. ແລະຍິ່ງໄປກວ່ານັ້ນ, ພຣະເຢຊູເຈົ້າໄດ້ປະຈັກມາຫາພວກເຮົາໃນມະຫາບູຊາມິຊຊາ ເພື່ອເປັນອາຫານລ້ຽງຊີວິດວິນຍານພວກເຮົາ. ຍ້ອນພຣະເຢຊູເຈົ້າກ່າວວ່າ: ຜູ້ໃດກິນກາຍຂອງເຮົາແລະດື່ມໂລຫິດຂອງເຮົາ ຜູ້ນັ້ນກໍຈະມີຊີວິດ. ແລະພຣະອົງກໍຈະຢູ່ໃນຜູ້ນັ້ນ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ເຫັນພຣະເຢຊູເຈົ້າຜູ້ປະຈັກມາຫາພວກເຮົາແລະປະທັບຢູ່ທ່າມກາງພວກເຮົາໃນວັນນີ້ແລະໃນທີ່ນີ້. ເພື່ອພວກເຮົາຈະໄດ້ເຊື່ອໃນພຣະອົງແລະຈະໄດ້ຮັບຊີວິດຈາກພຣະອົງ. ອາແມນ.

ຄຸນພໍ່ ອັງຕວນ ກຽດຕິສັກ